ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນສູງສຸດ　　　　　　　　　　ເລກທີ: 237/ອອປສ.ສຄຝ

ສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ　　　　　　ນະຄອນຫຼວງວຽງຈັນ,ວັນທີ: 22 / 02 /2011

ອົງການໄອຍະການປະຊາຊົນ ເຂດ II
ເລກທີ 74
ວັນທີ 25-2-2011
ເລຂາ

# ບົດແນະນຳ

## ຂອງຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ

## ກ່ຽວກັບການນຳໃຊ້ແບບຟອມສະຖິຕິການກະທຳຜິດຂອງເດັກ

ຮຽນ: - ບັນດາ ອົງການໄອຍະການປະຊາຊົນພາກເໜືອ, ພາກກາງ ແລະ ພາກໃຕ້.

- ບັນດາອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງວຽງຈັນ.
- ບັນດາອົງການໄອຍະການປະຊາຊົນເຂດ.

- ອີງຕາມ: ຂໍ້ຕົກລົງຂອງ ຫົວໜ້າອົງການໄອຍະການປະຊາຊົນສູງສຸດສະບັບເລກທີ 500/ອອປສ ລົງວັນ ທີ 06/09/2011 ວ່າດ້ວຍການຮັບຮອງ ແລະ ອະນຸມັດນຳໃຊ້ຮ່າງສະຖິຕິ ການກະທຳຜິດຂອງເດັກ.
- ອີງຕາມ: ຕາຕະລາງ ແບບຟອມສະຖິຕິການກະທຳຜິດຂອງເດັກ ຂອງອົງການໄອຍະການປະຊາຊົນ

I. ຈຸດປະສົງ ແລະ ລະດັບຄາດໝາຍ.

1. ຈຸດປະສົງ.

- ເພື່ອເປັນການປັບປຸງລະບົບລາຍງານ ສະພາບການລະເມີດກົດໝາຍຂອງເດັກ ໃນລະບົບຂອງອົງການໄອຍະການ ໃຫ້ທ່ວງທັນກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານ ການປົກປ້ອງສິດທິເດັກ.
- ເພື່ອເຮັດໃຫ້ລະບົບຂໍ້ມູນສະຖິຕິ ຮັບໃຊ້ໃຫ້ແກ່ການນຳ ແຕ່ລະຂັ້ນໃນການຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານປົກປ້ອງສິດທິເດັກໃນໄລຍະຜ່ານມາ ແລະ ເປັນຂໍ້ມູນໃນການວາງແຜນຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍຂອງເດັກໃຫ້ມີປະສິດທິພາບສູງຂຶ້ນກວ່າເກົ່າ.
- ເຮັດໃຫ້ລະບົບຂໍ້ມູນຂ່າວສານ ສາມາດເຊື່ອມໂຍງເຂົ້າກັບລະບົບຂໍ້ມູນຂອງ 04 ອົງການ ທີ່ເຮັດໜ້າທີ່ປົກປ້ອງສິດທິເດັກໃນໂຊງເຂດຍຸຕິທຳ.

2. ລະດັບຄາດໝາຍ.

- ແບບຟອມສະຖິຕິນີ້ ຈະເປັນເອກະສານໃຫ້ບັນດາ ອົງການໄອຍະການ ປະຊາຊົນພາກ, ແຂວງ, ນະຄອນ, ເຂດ ເພື່ອສາມາດເກັບກຳສັງລວມ, ວິໄຈຂໍ້ມູນກ່ຽວກັບການກະທຳຜິດຂອງເດັກ
- ກຳນົດເວລາໃນການຈັດຕັ້ງປະຕິບັດແບບຟອມລະຖິຕິໃຫ້ເລີ້ມແຕ່ ວັນທີ 15/04/2012
- ຊ່ວຍເຮັດໃຫ້ພະແນກຄົ້ນຄວ້າສັງລວມ ສາມາດສັງລວມຂໍ້ມູນ ສະຖິຕິດັ່ງກ່າວໃນທົ່ວປະເທດ ໄດ້ຢ່າງເປັນ ລະບົບຕາມແຕ່ລະໄລຍະເວລາ.

## II. ລະບົບສະຖິຕິການກະທຳຜິດຂອງເດັກຂອງອົງການໄອຍະການ.

ສະຖິຕິການກະທຳຜິດຂອງເດັກ ຂອງອົງການໄອຍະການ ປະກອບມີ 04 ຂັ້ນຄື: ຂັ້ນອົງການໄອຍະການປະຊາຊົນເຂດ, ຂັ້ນອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງວຽງຈັນ, ຂັ້ນອົງການໄອຍະການພາກ ແລະ ຂັ້ນອົງການໄອຍະການປະຊາຊົນສູງສຸດ.

ແຕ່ລະຂັ້ນນັ້ນ ປະກອບດ້ວຍສະຖິຕິການຮັບສຳນວນຄະດີອາຍາຂອງເດັກມາແກ້ໄຂ ແລະ ສະຖິຕິການແກ້ໄຂ ຄະດີດັ່ງກ່າວພາຍໃນເດືອນ.

ການລາຍງານສະຖິຕິການກະທຳຜິດຂອງເດັກ ຂັ້ນເຂດຕ້ອງລາຍງານໃຫ້ ອົງການໄອຍະການແຂວງ, ນະຄອນຫຼວງຊາບ ເຖິງວຽກງານທີ່ຕົນເອງໄດ້ຈັດຕັ້ງປະຕິບັດ;

ການລາຍງານສະຖິຕິການກະທຳຜິດຂອງເດັກຂັ້ນອົງການໄອຍະການ ປະຊາຊົນແຂວງ ຫຼື ນະຄອນຫຼວງ ແລະ ອົງການໄອຍະການປະຊາຊົນພາກ ຕ້ອງລາຍງານໃຫ້ຫ້ອງ ການອົງການໄອຍະການປະຊາຊົນສູງສຸດ (ພະແນກຄົ້ນຄວ້າສັງລວມ ) ເພື່ອສັງລວມຂໍ້ມູນ ທັງໝົດ ໃຫ້ທ່ານຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໂດຍໃຫ້ມັນເຊື່ອມໂຍງ ແລະ ສອດຄ່ອງກັບ ລະບົບຖານຂໍ້ມູນລວມຂອງອົງການໄອຍະການປະຊາຊົນສູງສຸດ ທີ່ໄດ້ນຳໃຊ້ໃນປະຈຸບັນ.

## III. ເນື້ອໃນຂອງແບບຟອມສະຖິຕິ.

ເນື້ອໃນຂອງແບບຟອມສະຖິຕິແມ່ນ ເລີ້ມຕົ້ນຈາກການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນຕາມພາລະບົດບາດທີ່ກົດໝາຍໄດ້ກຳນົດໄວ້

1. ແບບຟອມສະຖິຕິຂອງອົງການໄອຍະການປະຊາຊົນເຂດ.

ກ. ແບບຟອມສິຖິຕິຂາເຂົ້າ ແມ່ນແບບຟອມສະຖິຕິທີ່ອົງການໄອຍະການປະຊາຊົນເຂດໄດ້ຮັບຂໍ້ມູນ ຈາກອົງການ ສືບສວນ - ສອບສວນ ເມືອງທີ່ຂຶ້ນກັບເຂດ ປະກອບມີ 02 ແບບຟອມຄື: ຂາເຂົ້າ ແລະ ຂາອອກ.

+ ເນື້ອໃນ

- ຊື່ເມືອງ: ແມ່ນບ່ອນທີ່ຄະດີເກີດຂຶ້ນເຊິ່ງນອນຢູ່ໃນສິດອຳນາດຂອງເຂດເປັນຜູ້ຄົ້ນຄວ້າ ແກ້ໄຂ

- ຄະດີທີ່ ປກສ ໄດ້ແກ້ໄຂແລ້ວ: ແມ່ນຄະດີທີ່ທາງ ປກສ ຂັ້ນບ້ານ, ເມືອງ ໄດ້ທຳການໄກ່ເກ່ຍ ແລະ ຄູ່ຄວາມ ໄດ້ຕົກລົງຍິນຍອມກັນແລ້ວ ຊຶ່ງສະຖິຕິດັ່ງກ່າວໄດ້ມາຈາກຂໍ້ມູນທີ່ທາງ ປກສ ລາຍງານ, ບົດລາຍງານຂອງ ປ ກ ສ ນັ້ນແມ່ນລະບຸຊື່, ທີ່ຢູ່, ສະຖານການກະທຳຜິດ ຢ່າງລະອຽດ. ແຕ່ເວລາ ອົງການໄອຍະການປະຊາຊົນເຂດ ລາຍງານແຂວງ ແມ່ນສະຫຼຸບ ແຕ່ຕົວເລກເທົ່ານັ້ນ, ຖ້າແຂວງຕ້ອງການຈຶ່ງອັດສຳເນົາສົ່ງໃຫ້.
- ຄະດີທີ່ຄ້າງມາແຕ່ເດືອນກ່ອນ: ໝາຍເຖິງສຳນວນຄະດີໄດ້ເຂົ້າມາຜ່ານ ຂາເຂົ້າ - ຂາອອກ ຂອງອົງການໄອຍະການປະຊາຊົນເຂດ ແຕ່ບໍ່ທັນສົ່ງອອກ ຫຼື ທີ່ແກ້ໄຂ ບໍ່ທັນໄດ້ໃຫ້ຖືວ່າເປັນຄະດີຄ້າງ ( ຄະດີທີ່ສົ່ງຄືນພາກສ່ວນອື່ນແກ້ໄຂໃຫ້ຖືວ່າເປັນຄະດີທີ່ແກ້ໄຂແລ້ວ ); ເມື່ອສຳເລັດຄະດີສົ່ງກັບຄືນມາ ໄອຍະການ ແມ່ນໃຫ້ຖືວ່າເປັນຄະດີເຂົ້າໃໝ່.
- ປະເພດຂອງຄະດີເຂົ້າໃໝ່: ໝາຍເຖິງຂໍ້ກ່າວຫາທີ່ຜູ້ກະທຳຜິດໄດ້ລະເມີດກົດໝາຍ. ເພື່ອຄວາມສະດວກ, ວ່ອງໄວ ຢູ່ໃນແບບຟອມຈຶ່ງໄດ້ຂຽນຂໍ້ຫາທີ່ມັກເກີດຂຶ້ນຢູ່ໃນສັງຄົມ, ຖ້າເປັນຂໍ້ກ່າວຫາອື່ນກໍ່ໃຫ້ຂຽນໃສ່ໃນຫ້ອງ " ອື່ນໆ" ແລະ ຄຳວ່າ "ລວມ" ໃນແບບຟອມນັ້ນໝາຍວ່າລວມຈຳນວນສຳນວນຄະດີເຂົ້າມາໃໝ່ມີທັງໝົດເທົ່າໃດ.
- ລວມຄະດີໃນເດືອນທັງໝົດ: ໝາຍວ່າເອົາຕົວເລກສຳນວນຄະດີທີ່ຄ້າງ ມາແຕ່ເດືອນກ່ອນບວກກັບຕົວເລກປະເພດຂອງຄະດີເຂົ້າມາໃໝ່ ອອກມາເປັນລວມຄະດີໃນເດືອນທັງໝົດ.
- ອາຍຸຕ່ຳກວ່າ 15 ປີ: ແມ່ນອາຍຸຂອງເດັກທີ່ກະທຳຜິດເປັນຊາຍເທົ່າໃດ, ຍິງເທົ່າໃດ ແລະ ອາຍຸ 15 ປີ ຫາຕ່ຳກວ່າ 18 ປີ ກໍ່ເຊັ່ນດຽວກັນ ເພື່ອໃຫ້ຈຳແນກໄດ້ລະຫວ່າງຜູ້ທີ່ພົ້ນນິຕິພາວະ ແລະ ຜູ້ທີ່ບໍ່ສາມາດນຳມາດຳເນີນຄະດີໄດ້.
- ອາຊີບຕົ້ນຕໍ: ໝາຍເຖິງເດັກທີ່ໄດ້ກະທຳຜິດໃນເວລານັ້ນ ແມ່ນມີອາຊີບຫຍັງຕົ້ນຕໍ ເຊັ່ນຕົວຢ່າງ: ນັກຮຽນ ຫຼື ກຳມະກອນ; ຖ້າເປັນອາຊີບອື່ນກໍ່ໃຫ້ຂຽນໃສ່ຫ້ອງ "ອື່ນໆ"

ຂ. ແບບຟອມສະຖິຕິຂາອອກ

ແມ່ນແບບຟອມສະຖິຕິປະຈຳເດືອນ ທີ່ອົງການໄອຍະການປະຊາຊົນເຂດ ລາຍງານອົງການໄອຍະການປະຊາຊົນແຂວງ.

+ ເນື້ອໃນ:

- ຊື່ເມືອງ: ແມ່ນບ່ອນທີ່ມີເຫດການລະເມີດກົດໝາຍເກີດຂຶ້ນ
- ລວມຄະດີທັງໝົດ: ໝາຍວ່າແມ່ນສຳນວນຄະດີທັງຄ້າງ ແລະ ເຂົ້າມາໃໝ່ພາຍໃນເດືອນ.

+ ຄະດີທີ່ແກ້ໄຂພາຍໃນເດືອນ:

- ຖອນຟ້ອງ: ໝາຍວ່າເປັນສຳນວນຄະດີທີ່ໂຈດທາງແພ່ງໄດ້ ຂໍຖອນຄຳຮ້ອງຟ້ອງເຊິ່ງອາດຍ້ອນສາເຫດໃດໜຶ່ງທີ່ບໍ່ຂັດກັບກົດໝາຍ

- ການໄກ່ເກ່ຍ: ໝາຍວ່າ ສຳນວນຄະດີທີ່ທາງອົງການໄອຍະການປະຊາຊົນເຂດ ໄດ້ທຳການໄກ່ເກ່ຍໃຫ້ຄູ່ຄວາມມີການປະນີປະນອມກັນ ແລະ ສຶກສາອົບຮົມໃຫ້ຜູ້ກະທຳຜິດ ປະຕິບັດຕາມລະບຽບຂອງກົດໝາຍ ວ່າດ້ວຍການປົກປ້ອງສິດທິເດັກສຳເລັດ.
- ຊັດມ້ຽນ, ການໂຈະການດຳເນີນຄະດີ: ໝາຍເຖິງຄະດີທີ່ທາງອົງການໄອຍະການປະຊາຊົນເຂດໄດ້ທຳການຊັດມ້ຽນ ຫຼື ໂຈະການດຳເນີນຄະດີ ໄວ້ຕາມເງື່ອນໄຂທີ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ລະບຸໄວ້.
- ສົ່ງໄປບ່ອນອື່ນ: ແມ່ນສຳນວນຄະດີທີ່ທາງ ອົງການໄອຍະການປະຊາຊົນເຂດ ໄດ້ຄົ້ນຄວ້າອາດເຫັນວ່າຜູ້ທີ່ກະທຳຜິດນັ້ນມີເງື່ອນໄຂໃນການສັ່ງຟ້ອງ ຈຶ່ງສົ່ງສຳນວນຄະດີໃຫ້ສານເປັນຜູ້ພິຈາລະນາຕັດສິນ ກໍ່ຂີດເຄື່ອງໝາຍ " ✓" ໃສ່ຫ້ອງ "ສານ" ຫຼື ຜ່ານການຄົ້ນຄວ້າແລ້ວເຫັນວ່າການປະກອບຫຼັກຖານຂອງເຈົ້າໜ້າທີ່ຍັງບໍ່ທັນຄົບຖ້ວນ, ຮອບດ້ານ, ພາວະວິໄສ, ອົງການໄອຍະການ ມີຄວາມຈຳເປັນໃຫ້ເຈົ້າໜ້າທີ່ ສືບສວນ ເພີ່ມເຕີມຈຶ່ງໄດ້ສົ່ງສຳນວນຄະດີຄືນເຈົ້າໜ້າທີ່ ຈຶ່ງໃຫ້ໝາຍໃສ່ຫ້ອງ " ສົ່ງກັບ ປກສ "

ບ່ອນອື່ນໆ ກໍ່ເຊັ່ນດຽວກັນແມ່ນສຳນວນຄະດີ ທີ່ອົງການໄອຍະການເຂດ ເຫັນວ່າການນຳໃຊ້ມາດຕະການຕ່າງໆ ຕາມກົດໝາຍວ່າດ້ວຍການປົກປ້ອງສິດທິເດັກຂອງອົງການທີ່ໄດ້ດຳເນີນການແກ້ໄຂໃນຜ່ານມາຍັງບໍ່ຄົບຖ້ວນ ອົງການໄອຍະການ ໄດ້ສົ່ງສຳນວນຄະດີຄືນພາກສ່ວນດັ່ງກ່າວ ຕົວຢ່າງ ຄະນະໄກ່ເກ່ຍຄະດີເດັກຂັ້ນບ້ານ ຫຼື ພະແນກຍຸຕິທຳເມືອງ ບ່ອນທີ່ເຫດການເກີດຂຶ້ນ.

ລວມການແກ້ໄຂ: ໝາຍວ່າຄືດັ່ງກ່າວມາຂ້າງເທິງນັ້ນ ສຳນວນຄະດີທີ່ທາງ ອົງການໄອຍະການປະຊາຊົນເຂດ ໄດ້ທຳການແກ້ໄຂ ພາຍໃນເດືອນມີທັງໝົດຈັກເລື່ອງ ເຊິ່ງລວມທັງຄະດີທີ່ແກ້ໄຂໄດ້ ແລະ ຄະດີທີ່ສົ່ງໃຫ້ພາກສ່ວນອື່ນແກ້ໄຂ.

+ ປະເພດຄະດີທີ່ໄດ້ແກ້ໄຂໃນເດືອນ: ໝາຍເຖິງຄະດີ ທີ່ທາງອົງການໄອຍະການປະຊາຊົນເຂດໄດ້ແກ້ໄຂພາຍໃນເດືອນເຊິ່ງຢູ່ໃນຫ້ອງລຸ່ມ ມີຫຼາຍກໍລະນີຄະດີ ( ຂໍ້ກ່າວຫາ ) ເພື່ອຄວາມສະດວກໂດຍໃຊ້ເຄື່ອງໝາຍ "✓" ຖ້າເປັນຂໍ້ກ່າວຫາອື່ນກໍ່ຂຽນຊື່ຂໍ້ກ່າວຫາ " ອື່ນໆ " ແລະ ຫ້ອງຖັດຕໍ່ໄປແມ່ນລວມຄະດີທີ່ໄດ້ຮັບການແກ້ໄຂທັງໝົດມີຈັກເລື່ອງ.

+ ຄະດີຄ້າງໃນເດືອນ: ໝາຍເຖິງສຳນວນຄະດີທີ່ທາງຂາເຂົ້າໄດ້ ຈົດເລກທີ ຂາເຂົ້າ ແຕ່ບໍ່ທັນໄດ້ໃສ່ເລກທີ ຂາອອກ ໃຫ້ຖືວ່າເປັນຄະດີຄ້າງໃນເດືອນ.

ສ່ວນຫ້ອງໝາຍເຫດ: ນັ້ນແມ່ນໃຫ້ຫົວໜ້າອົງການໄອຍະການ ມີຄຳເຫັນກ່ອນຈະລົງລາຍເຊັນ

2 ແບບຟອມສະຖິຕິຂອງອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ

3. ແບບຟອມສະຖິຕິຂອງ ອົງການໄອຍະການປະຊາຊົນພາກ

ແບບຟອມສະຖິຕິຂອງອົງການໄອຍະການປະຊາຊົນແຂວງ ຫຼື ນະຄອນຫຼວງ ແລະ ແບບຟອມ ສະຖິຕິຂອງອົງການປະຊາຊົນພາກ ແມ່ນມີເນື້ອໃນຄືກັບແບບຟອມສະຖິຕິຂອງອົງການໄອຍະການປະຊາຊົນເຂດ ແລະ ມີທັງແບບຟອມຂາເຂົ້າ ແລະ ຂາອອກ ແຕ່ມີຄວາມແຕກຕ່າງ ກ່ຽວກັບຂໍ້ມູນທີ່ໄດ້ມາໂດຍອົງການໄອຍະການປະຊາຊົນແຂວງ ແມ່ນຂໍ້ມູນມາຈາກ ການລາຍງານຂອງອົງການ ໄອຍະການກປະຊາຊົນ ເຂດ, ສ່ວນອົງການໄອຍະການປະຊາຊົນພາກ ແມ່ນໄດ້ຮັບຂໍ້ມູນການລາຍງານຈາກອົງການໄອຍະການປະຊາຊົນເຂດ, ສະຖິຕິການແກ້ໄຂຄະດີຂອງອົງການໄອຍະການ ປະຊາຊົນແຂວງ ແມ່ນ ລາຍງານເຖິງ ອົງການໄອຍະການປະຊາຊົນສູງສຸດ 1ສະບັບ ແລະ ອີກ 1ສະບັບແມ່ນໃຫ້ລາຍງານເຖິງອົງການໄອຍະການປະຊາຊົນພາກ ເພື່ອຕິດຕາມ. ສະນັ້ນຈຶ່ງເຫັນວ່າມັນມີຄວາມແຕກຕ່າງ ກັນບ່ອນທີ່ມາຂອງແຫຼ່ງຂໍ້ມູນເທົ່ານັ້ນ, ສ່ວນເນື້ອໃນລາຍງານແມ່ນຄ້າຍຄືກັນ.

4. ແບບຟອມສະຖິຕິຂອງອົງການໄອຍະການປະຊາຊົນສູງສຸດ.

ແບບຟອມສະຖິຕິຂອງອົງການໄອຍະການປະຊາຊົນສູງສຸດ ກໍ່ມີເນືອໃນຄືກັນກັບຮ່າງ ສະຖິຕິຂອງອົງການໄອຍະການປະຊາຊົນເຂດ, ແຂວງ, ນະຄອນ ແລະ ພາກ, ແຕ່ມີຄວາມແຕກຕ່າງກ່ຽວກັບ ຂໍ້ມູນສະຖິຕິ ແມ່ນໄດ້ມາຈາກການລາຍງານຂອງບັນດາອົງການໄອຍະການປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນພາກ ໂດຍກໍານົດບັນດາແຂວງຕ່າງໆ ເຂົ້າເປັນແຕ່ລະພາກເພື່ອສະດວກໃນການກວດກາການລະເມີດກົດໝາຍຂອງເດັກ ແລະ ການແກ້ໄຂຄະດີເດັກຂອງບັນດາແຂວງ.

## IV. ວິທີການຈັດຕັ້ງປະຕິບັດ.

ເພື່ອເຮັດໃຫ້ລະບົບຂໍ້ມູນ ມີຄວາມເປັນເອກະພາບໃນທົ່ວລະບົບອົງການໄອຍະການປະຊາຊົນໃນພວກເຮົາຕ້ອງໄດ້ເອົາໃຈໃສ່ປະຕິບັດດັ່ງລຸ່ມນີ້:

1. ພາຍຫຼັງມີຂໍ້ຕົກລົງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ວ່າດ້ວຍການຮັບຮອງ ແລະ ອະນຸມັດນໍາໃຊ້ ແບບຟອມສະຖິຕິການກະທໍາຜິດຂອງເດັກ ແລະ ບົດແນະນໍາການນໍາໃຊ້ ແບບຟອມສະຖິຕິການກະທໍາຜິດຂອງເດັກ ຂອງຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການແລ້ວໃຫ້ ບັນດາອົງການໄອຍະການປະຊາຊົນທົ່ວປະເທດຕ້ອງແນະນໍາມອບໝາຍໃຫ້ ໜ່ວຍງານຂະແໜງການໃດໜຶ່ງເປັນຜູ້ຮັບຜິດຊອບ ເພື່ອສັງລວມສະຫຼຸບລາຍງານເປັນປະຈໍາເດືອນ ເພື່ອລາຍງານຂັ້ນເທິງຂອງຕົນ.
2. ການລາຍງານສະພາບການລະເມີດກົດໝາຍຂອງເດັກ ຂອງບັນດາເຂດ, ແຂວງ ແລະ ພາກ ແມ່ນໃຫ້ເລີ່ມແຕ່ ວັນທີ 15 ຂອງທຸກໆເດືອນ ແລະ ໃຫ້ເລີ່ມຕົ້ນຈັດຕັ້ງປະຕິບັດແຕ່ ວັນທີ 15 ເດືອນ 04 ປີ

ປີ 2012 ເປັນຕົ້ນໄປ.

3. ພະແນກຄົ້ນຄວ້າສັງລວມ ຂອງຫ້ອງການອົງການໄອຍະການປະຊາຊົນສູງສຸດ ຮັບຜິດຊອບ ສັງລວມຂໍ້ມູນ ສະຖິຕິການລະເມີດກົດໝາຍຂອງເດັກ ໃນລະບົບອົງການໄອຍະການ ຂອບເຂດທົ່ວປະເທດ ເພື່ອເປັນຖານຂໍ້ມູນລາຍງານຂັ້ນເທິງ.

ຫົວໜ້າສະຖາບັນຄົ້ນຄວ້າ ແລະ ຝຶກອົບຮົມໄອຍະການ

ບຸນມາ ພິມສະນິດ